Quizizz

NAME :

CLASS :

DATE :

Examination: Skills on court enforcement (Laos)

20 Questions

1. ຂໍ້ໃດຖືກທີ່ສຸດ, ຄຳຕັດສິນຂອງສານທີ່ໃຊ້ໄດ້ຢ່າງເດັດຂາດແລ້ວນັ້ນມີຜົນແນວໃດ?

A ມີຜົນສັກສິດ

B ມີຜົນດີຕໍ່ທຸກຝ່າຍ

C ມີຜົນບັງຄັບປະຕິບັດ

2. ຫຼັກການໃນການປະຕິບັດຄຳຕັດສິນຂອງສານ ຂອງ ສປປ ລາວ ມີຈັກຫຼັກການ?

A 3 ຫຼັກການ

B 8 ຫຼັກການ

C 6 ຫຼັກການ

3. ຂໍ້ໃດຖືກທີ່ສຸດ, ການປະຕິບັດດ້ວຍຄວາມສະໝັກໃຈ ແມ່ນແນວໃດ?

A ການຕົກລົງຂອງຄູ່ຄວາມໃນການປະຕິບັດ ຫຼື ບໍ່ປະຕິບັດຕາມຄຳຕັດສິນຂອງສານ ຊຶ່ງການຕົກລົງນັ້ນຕ້ອງຖືກກັບກົດໝາຍ ແລະ ບໍ່ສ້າງຄວາມອັບປະໂຫຍດໃຫ້ແກ່ ລັດ, ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງອື່ນ

B ການຕົກລົງຂອງຄູ່ຄວາມໃນການປະຕິບັດຄຳຕັດສິນຂອງສານ

C ແມ່ນ ການຕົກລົງຂອງຄູ່ຄວາມໃນການປະຕິບັດ ຫຼື ບໍ່ປະຕິບັດຕາມຄຳຕັດສິນຂອງສານ ຊຶ່ງການຕົກລົງນັ້ນຕ້ອງບໍ່ຂັດກັບກົດໝາຍ ແລະ ບໍ່ສ້າງຄວາມອັບປະໂຫຍດໃຫ້ແກ່ ລັດ, ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງອື່ນ

4. ຂໍ້ໃດຖືກທີ່ສຸດ, ເມື່ອການປະຕິບັດຄຳຕັດສິນຂອງສານໄດ້ສິ້ນສຸດແລ້ວ ພະນັກງານປະຕິບັດຄຳຕັດສິນຂອງສານຕ້ອງເຮັດຫຍັງ?

A ສະເໜີໃຫ້ຫົວໜ້າອົງການປະຕິບັດຄຳຕັດສິນຂອງສານເພື່ອອອກຄຳສັ່ງປິດສຳນວນຄະດີ

B ອອກຄຳສັ່ງປິດສຳນວນຄະດີ

C ສະລຸບ ແລະ ອອກຄຳສັ່ງປິດສຳນວນຄະດີ

5. ການປະຕິບັດ ໂທດປັບໃໝ, ໂທດຮິບຊັບ, ໂທດຮິບວັດຖຸສິ່ງຂອງ, ໂທດດັດສ້າງໂດຍບໍ່ຕັດອິດສະລະພາບ ແລະ ການໃຊ້ແທນຄ່າເສຍຫາຍທາງແພ່ງ ແມ່ນ ອົງການໃດຮັບຜິດຊອບໃນການຈັດຕັ້ງປະຕິບັດ

A ຂະແໜງປ້ອງກັນຄວາມສະຫງົບ

B ອົງການປະຕິບັດຄຳຕັດສິນຂອງສານ

C ຂະແໜງການຍຸຕິທຳ

6. ໂທດຕັດອິດສະຫຼະພາບແມ່ນອົງການໃດຮັບຜິດຊອບໃນການຈັດຕັ້ງປະຕິບັດ?

A ຂະແໜງປ້ອງກັນຄວາມສະຫງົບ

B ອົງການໄອຍະການປະຊາຊົນ

C ຂະແໜງປ້ອງກັນປະເທດ

7. *ຂໍ້ໃດຖືກທີ່ສຸດ, ໃນການປະຕິບັດຄໍາຕັດສິນຄະດີອາຍາ ກ່ຽວກັບການໃຊ້ແທນຄ່າເສັຍຫາຍທາງແພ່ງ ?*

A *ໃຫ້ປະຕິບັດຄືກັບກັບການປະຕິບັດຄໍາຕັດສິນຄະດີແພ່ງ*

B ຖືກທັງສອງຂໍ້

C ປະຕິບັດແຕກຕ່າງກັບຄະດີແພ່ງ

8. ມາດຕະການຕໍ່ການປະຕິບັດຄໍາຕັດສິນຂອງສານ ແມ່ນຫຍັງ?

A ມາດຕະການຂອງອົງການປະຕິບັດຄໍາຕັດສິນຂອງສານ ວາງອອກໃນລັກສະນະເປັນຄໍາສັ່ງຕ່າງໆ

B ມາດຕະການຂອງອົງການປະຕິບັດຄໍາຕັດສິນຂອງສານ ໃນບັງຄັບປະຕິບັດຄໍາຕັດສິນຂອງສານ

C ມາດຕະການຂອງອົງການປະຕິບັດຄໍາຕັດສິນຂອງສານ ຕໍ່ຄູ່ຄວາມ

9. ຂໍ້ໃດຖືກທີ່ສຸດລຸ່ມນີ້, ມາດຕະການ ໃນການປະຕິບັດຄໍາຕັດສິນຂອງສານ?

A ການໝາຍຮຽກຄູ່ຄວາມ

B ການແຈ້ງໃຫ້ຄູ່ຄວາມຮັບຊາບຄໍາຕັດສິນຂອງສານ

C ການຫັກເງິນ ໃນບັນຊີຂອງຜູ້ຖືກປະຕິບັດຄໍາຕັດສິນຂອງສານ

10. ຜູ້ຖືກປະຕິບັດຄໍາຕັດສິນຂອງສານ ໝາຍເຖິງ ?

A ຜູ້ມີພັນທະປະຕິບັດສິ່ງໃດໜຶ່ງ ຕາມທີ່ໄດ້ກໍານົດໄວ້ໃນຄໍາຕັດສິນຂອງສານ ແລະ ລະບຽບການອື່ນ

B ຜູ້ມີພັນທະປະຕິບັດສິ່ງໃດໜຶ່ງ ຕາມທີ່ໄດ້ກໍານົດໄວ້ໃນຄໍາຕັດສິນຂອງສານ

C ຜູ້ມີພັນທະປະຕິບັດສິ່ງໃດໜຶ່ງ ຕາມທີ່ໄດ້ກໍານົດໄວ້ໃນກົດໝາຍ

11. ການຮິບຊັບ ໝາຍເຖິງ ?

A ການເອົາຊັບທັງໝົດ ຫຼື ສ່ວນໃດສ່ວນໜຶ່ງ ທີ່ເປັນກໍາມະສິດຂອງຄູ່ຄວາມເປັນຂອງລັດ ຕາມຄໍາຕັດສິນຂອງສານ ໂດຍບໍ່ມີການໃຊ້ແທນ

B ການເອົາຊັບທັງໝົດ ຫຼື ສ່ວນໃດສ່ວນໜຶ່ງ ທີ່ເປັນກໍາມະສິດຂອງຜູ້ກະທໍາຜິດເປັນຂອງລັດ ຕາມຄໍາຕັດສິນຂອງສານ ໂດຍບໍ່ມີການໃຊ້ແທນ

C ການເອົາຊັບທັງໝົດ ຫຼື ສ່ວນໃດສ່ວນໜຶ່ງ ທີ່ເປັນກໍາມະສິດຂອງຜູ້ກະທໍາຜິດເປັນຂອງລັດ ຕາມກົດໝາຍ

12. ການໂຈະການປະຕິບັດຄຳຕັດສິນ ໝາຍເຖິງ ?

A ການຍຸດ ການປະຕິບັດຄຳຕັດສິນຂອງສານໄວ້ຊົ່ວຄາວ ເມື່ອໝົດສາເຫດຂອງການໂຈະແລ້ວ ກໍຕ້ອງສືບຕໍ່ປະຕິບັດ

B ຖືກທັງສອງຂໍ້

C ການຍຸດ ການປະຕິບັດຄຳຕັດສິນຂອງສານໄວ້ຕາມກຳນົດເວລາຄັກແດ່ ເມື່ອໝົດສາເຫດຂອງການໂຈະແລ້ວ ກໍຕ້ອງສືບຕໍ່ປະຕິບັດ

13. ການປ່ຽນແປງການປະຕິບັດຄຳຕັດສິນ ໝາຍເຖິງ ?

A ການປ່ຽນແປງການປະຕິບັດຄຳຕັດສິນຂອງສານທັງໝົດ ທີ່ເຫັນວ່າບໍ່ຖືກຕ້ອງ, ບໍ່ສອດຄ່ອງກັບຄຳຕັດສິນຂອງສານ ຫຼື ກົດໝາຍ

B ການປ່ຽນແປງການປະຕິບັດຄຳຕັດສິນຂອງສານ ສ່ວນໃດສ່ວນໜຶ່ງ ຫຼື ທັງໝົດ ທີ່ເຫັນວ່າບໍ່ຖືກຕ້ອງ, ບໍ່ສອດຄ່ອງກັບຄຳຕັດສິນຂອງສານ ຫຼື ກົດໝາຍ

C ການປ່ຽນແປງການປະຕິບັດຄຳຕັດສິນຂອງສານ ສ່ວນໃດສ່ວນໜຶ່ງ ທີ່ເຫັນວ່າບໍ່ຖືກຕ້ອງ, ບໍ່ສອດຄ່ອງກັບຄຳຕັດສິນຂອງສານ ຫຼື ກົດໝາຍ

14. ການລົບລ້າງການປະຕິບັດຄຳຕັດສິນ ໝາຍເຖິງ ?

A ການຍົກເລີກທັງໝົດການປະຕິບັດຄຳຕັດສິນຂອງສານໃນສ່ວນທີ່ບໍ່ສອດຄ່ອງກັບກົດໝາຍ

B ຖືກທັງສອງຂໍ້

C ການຍົກເລີກທັງໝົດການປະຕິບັດຄຳຕັດສິນຂອງສານຜ່ານມາແຕ່ຕົ້ນຕະຫຼອດປາຍ

15. ຄຳຕັດສິນຂອງສານປະກອບດ້ວຍ?

A ຖືກທັງສອງຂໍ້

B ຕັດສິນ ແລະ ຄຳພິພາກສາ ຂອງສານ.

C ຄຳສັ່ງ, ຄຳຊີ້ຂາດ, ຄຳຕັດສິນ ແລະ ຄຳພິພາກສາຂອງສານ

16. ຜູ້ຍັງປະຕິບັດໂທດຢູ່, ຜູ້ໄດ້ຮັບການອະໄພຍະໂທດ ຫຼື ພົ້ນໂທດແລ້ວ ກໍຕ້ອງປະຕິບັດຄຳຕັດສິນຂອງສານ ກ່ຽວກັບການໃຊ້ແທນຄ່າເສຍຫາຍທາງແພ່ງບໍ?

A ຖືກທັງສອງຂໍ້

B ບໍ່ຕ້ອງ

C ຕ້ອງ

17. ອົງການໄອຍະການປະຊາຊົນສູງສຸດ ສະເໜີໂຈະຢ່າງເປັນລາຍລັກອັກສອນ ໃນກໍລະນີມີການຮື້ຟື້ນຄະດີ ຕາມກຳນົດເວລາທີ່ໄດ້ກຳນົດໄວ້ໃນກົດໝາຍຈະເປັນສາເຫດໃນການໂຈະປະຕິບັດຄຳຕັດສິນຂອງສານບໍ?

A ຖືກທັງສອງຂໍ້

B ເປັນສາເຫດ

C ເປັນສາເຫດ

18. ກອງປະຕິບັດຄຳຕັດສິນຂອງສານຢູ່ຂັ້ນແຂວງມີຖານະທຽບເທົ່າ?

A ໜ່ວຍງານຂັ້ນແຂວງ

B ພະແນກຂັ້ນແຂວງ

C ຫ້ອງການຂັ້ນແຂວງ

19. ອົງການຄຸ້ມຄອງວຽກງານປະຕິບັດຄຳຕັດສິນຂອງສານ ຢູ່ ສປປ ລາວ ປະກອບດ້ວຍຈັກຂັ້ນ?

A 2

B 3

C 4

20. ເຈົ້າໜີ້ເຫັນດີ ໃຫ້ຜູ້ຖືກປະຕິບັດຄຳຕັດສິນຂອງສານ ໂຈະການປະຕິບັດຄຳຕັດສິນຂອງສານ, ອົງການປະຕິບັດຄຳຕັດສິນຂອງສານຈະຕົກລົງໃຫ້ໂຈະບໍ?

A ຖືກທັງສອງຂໍ້

B ຕົກລົງໃຫ້ໂຈະ

C ບໍ່ຕົກລົງໃຫ້ໂຈະ

**Answer Key**

| | | | |
|---|---|---|---|
| 1.c | 2.a | 3.c | 4.a |
| 5.b | 6.a | 7.a | 8.a |
| 9.c | 10.b | 11.b | 12.a |
| 13.b | 14.c | 15.a | 16.c |
| 17.b | 18.b | 19.c | 20.b |